DEPARTMENT OF HEALTH

# ຄໍາແນະນໍາສໍາລັບການເກັບຕົວຢ່າງຂີ້ກະເທີ່ສໍາລັບ TB

## ເປັນຫຍັງການກວດຂີ້ກະເທີ່ຈຶ່ງມີຄວາມຈໍາເປັນ?

ທ່ານໝໍຂອງທ່ານຕ້ອງການເກັບຕົວຢ່າງຂອງຂີ້ກະເທີ່ ("ມູກ") ທີ່ທ່ານໄອອອກມາຈາກປອດຂອງທ່ານ. ຫ້ອງວິເຄາະຈະເອົາຂີ້ກະເທີ່ໄປກວດເພື່ອຊອກຫາເຊື້ອວັນນະໂລກ (TB) . ກວດຫາເຊື້ອທາງຂີ້ກະເທີ່ແມ່ນວິທີທີ່ດີທີ່ສຸດໃນການຄົ້ນຫາວ່າທ່ານມີເຊື້ອພະຍາດ TB ຫຼືບໍ່. ຖ້າທ່ານໄດ້ຮັບຢາສໍາລັບພະຍາດ TB ຮຽບຮ້ອຍແລ້ວ, ການກວດຫາເຊື້ອພະຍາດຜ່ານຂີ້ກະເທີ່ແມ່ນວິທີການທີ່ດີທີ່ສຸດທີ່ຈະຊ່ວຍໃຫ້ຮູ້ວ່າຢາທີ່ທ່ານໄດ້ຮັບແມ່ນໄດ້ຜົນກັບທ່ານຫຼືບໍ່. ເພື່ອໃຫ້ແນ່ໃຈວ່າການກວດແມ່ນຖືກຕ້ອງແນ່ນອນ, ທ່ານຕ້ອງໄອເອົາຂີ້ກະເທີ່ອອກມາຈາກ ປອດໃຫ້ໄດ້ເລິກທີ່ສຸດ. ຂີ້ກະເທີ່ທີ່ມາຈາກປອດຂອງທ່ານຈະຂ້ອນຂ້າງຊຸ້ນ ແລະ ໜຽວ. ນໍ້າລາຍທີ່ອອກມາຈາກປາກຂອງທ່ານຈະເປັນ ນໍ້າ ແລະ ໃສ. ບໍ່ເອົານໍ້າລາຍ.

**ວິທີການ: ຖ້າທ່ານບໍ່ສາມາດໄອເອົາຂີ້ກະເທີ່ອອກໄດ້, ໃຫ້ພະຍາຍາມສູດດົມເອົາອາຍຈາກນໍ້າຮ້ອນ ຫຼື ໝໍ້ຕົ້ມນໍ້າຮ້ອນ.**

## ວິທີການເກັບຕົວຢ່າງຂີ້ກະເທີ່

ທ່ານໝໍ ແລະ ພະຍາບານຈະເອົາຈອກຢາງພິເສດໃຫ້ທ່ານເພື່ອເກັບເອົາຂີ້ກະເທີ່ຂອງທ່ານ. ປະຕິບັດຕາມຂັ້ນຕອນຕໍ່ໄປນີ້ໃຫ້ດີ:

1. ຈອກຕ້ອງສະອາດດີທີ່ສຸດ. ຢ່າເປີດມັນຈົນກວ່າທ່ານພ້ອມແລ້ວທີ່ຈະໃຊ້ມັນ.
2. ໃນທັນທີທີ່ທ່ານຕື່ນນອນຕອນເຊົ້າ (ກ່ອນທີ່ທ່ານຈະກິນ ຫຼື ດື່ມ), ຖູແຂ້ວ ແລະ ລ້າງປາກດ້ວຍນໍ້າສະອາດ. ຫ້າມໃຊ້ນໍ້າຢາມ້ວນປາກ.
3. ຖ້າເປັນໄປໄດ້, ອອກໄປຂ້າງນອກ ຫຼື ເປີດປ່ອງຢ້ຽມກ່ອນຈະເກັບຕົວຢ່າງຂອງຂີ້ກະເທີ່. ນີ້ເປັນການຊ່ວຍປ້ອງກັນຄົນອື່ນຈາກເຊື້ອ TB ໃນເວລາທ່ານໄອ.
4. ສູດລົມຫາຍໃຈເຂົ້າເລິກໆ ແລະ ກັ້ນຫາຍໃຈເປັນເວລາ 5 ວິນາທີ. ປ່ອຍລົມຫາຍໃຈອອກຊ້າໆ. ສູດລົມຫາຍໃຈເຂົ້າອີກເລິກໆ ແລະ ໄອແຮງໆຈົນກວ່າຂີ້ກະເທີ່ຈະອອກມາໃສ່ປາກ.
5. ຖົ່ມຂີ້ກະເທີ່ໃສ່ຈອກຢາງກຽມໄວ້.
6. ປະຕິບັດແບບນັ້ນຈົນກວ່າຈະໄດ້ຂີ້ກະເທີ່ 5 ມລ (ຫຼື ຫຼາຍກວ່ານັ້ນ) ໃນຈອກ. ຂີ້ກະເທີ່ຈະໄດ້ປະມານ 1 ບ່ວງຊາ.
7. ປິດປາກຈອກໃຫ້ແໜ້ນເພື່ອບໍ່ໃຫ້ມັນໄຫຼອອກມາ.
8. ຂຽນວັນທີທີ່ທ່ານເກັບຕົວຢ່າງຂີ້ກະເທີ່ໃສ່ຈອກ.
9. ເອົາຈອກຢາງໃສ່ໃນກ່ອງ ຫຼື ຖົງທີ່ພະຍາບານໃຫ້ກັບທ່ານ.
10. ເອົາຈອກເກັບຕົວຢ່າງໃຫ້ກັບຄຣີນິກ ຫຼື ພະຍາບານຂອງທ່ານ. ທ່ານສາມາດ ເອົາຈອກຕົວຢ່າງແຊ່ຕູ້ເຢັນຂ້າມຄືນໄດ້ຖ້າຈໍາເປັນ. ຢ່າເອົາມັນແຊ່ແຂງ ຫຼື ປະໄວ້ໃນຫ້ອງທີ່ມີອຸທະພູມປົກກະຕິ.

Minnesota Department of Health
Tuberculosis Prevention and Control Program
651-201-5414
www.health.state.mn.us/tb

09/22/21 (Lao) *ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-5414.*